THYSAVANG et al. (2023). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 9. Issue 3. Jul - Sep. 2023. Page 206 – 213

# ປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ

**ບຸນທັນ ທິສະຫວ່າງ*, ສຸດທິດາ ຮຸ່ງແສງຟ້າ, ສຸກສະໝອນ ແສງຈັນ**

*ພາກວິຊາ ບໍລິຫານທຸລະກິດ ຄະນະເສດຖະສາດ ແລະ ການທ່ອງທ່ຽວ ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

***ຕິດຕໍ່ພົວພັນ:** *ບຸນທັນ ທິສະຫວ່າງ, ເບີໂທ: + 856 20 5566 6858, ອີເມວ: bounthantysavang@gmail.com*

***ຂໍ້ມູນບົດຄວາມ:***

*ການສົ່ງບົດ: 02 ມີນາ 2023*

*ການປັບປຸງ: 28 ພຶດສະພາ 2023*

*ການຕອບຮັບ: 06 ມິຖຸນາ 2023*

## ບົດຄັດຫຍໍ້

ການສຶກສາຄັ້ງນີ້ມີຈຸດປະສົງ ເພື່ອສຶກສາລະດັບຄວາມສາມາດໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນ ແລະ ຄວາມສຳພັນຂອງບັນດາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນ ຂອງຜູ້ປະກອບທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ, ໂດຍນຳໃຊ້ທິດສະດີຄວາມສາມາດຂອງຜູ້ປະກອບການ 5 ອົງປະກອບ: ຄວາມຫ້າວຫັນ, ຄວາມເປັນຕົວຕົນຂອງຕົນເອງ, ຄວາມກ້າສ່ຽງ, ຄວາມມີນະວັດຕະກຳ ແລະ ຄວາມເຂັ້ມແຂງທາງການແຂ່ງຂັນ  ແລະ ທິດສະດີສ່ວນປະສົມທາງການຕະຫຼາດ ດ້ານຜະລິດຕະພັນ, ດ້ານລາຄາ, ການການຈັດຈຳໜ່າຍ ແລະ ດ້ານການສົ່ງເສີມການຂາຍໃນການວິເຄາະຫາຄວາມສຳພັນ ແລະ ປັດໄຈທີ່ສົ່ງຜົນໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳ. ກຸ່ມຕົວຢ່າງທີ່ໃຊ້ການສຶກສາແມ່ນ ບັນດາຜູ້ປະກອບການຮ້ານຂາຍເຄື່ອງຫັດຖະກຳຕາມເຂດເທດສະບານ ແລະ ສູນຫັດຖະກຳທີ່ຂຶ້ນກັບນະຄອນຫຼວງພະບາງ ຈຳນວນ 84 ຮ້ານ. ເຄື່ອງມືທີ່ໃຊ້ເຂົ້າໃນການລວບລວມຂໍ້ມູນແມ່ນ ແບບສອບຖາມ ທີ່ມີລັກສະນະຄ່າ 5 ລະດັບຂອງ Likert Scale  ທີ່ມີຄວາມໜ້າເຊື່ອຖືໃນລະດັບ 0.829 (82.9%) ແລະ  ໂປຼແກຼມສຳເລັດຮູບທາງສະຖິຕິ SPSS ໃນການວິເຄາະຂໍ້ມູນໄດ້ແກ່: ຄ່າຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ຄ່າເພຍ ແລະ ສົມຜົນທົດຖອຍພະຫຸຄູນ.

ຜົນຂອງການສຶກສາພົບວ່າ ຄວາມສາມາດໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ ໂດຍລວມແມ່ນຢູ່ໃນລະດັບຫຼາຍ.ໃນນັ້ນ, ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳໃນນະຄອນຫຼວງພະບາງທີ່ມີຄ່າສະເລ່ຍສູງສຸດ (ລະດັບຫຼາຍທີ່ສຸດ) ແມ່ນ ດ້ານການສ້າງຄວາມແຕກຕ່າງ, ຮອງລົງມາແມ່ນ ດ້ານຍຸດທະສາດຂອງຕົ້ນທຶນ ແລະ ດ້ານການຕອບສະໜອງຢ່າງວ່ອງໄວ ຕາມລຳດັບ. ປັດໄຈດ້ານຄວາມສາມາດຂອງຜູ້ປະກອບການທີ່ມີຄວາມສຳພັນແບບເສັ້ນຊື່, ມີຜົນໄປໃນທິດທາງດຽວກັນ ແລະ  ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນນະຄອນຫຼວງພະບາງປະກອບມີ 2 ປັດໄຈ ຄື: ປັດໄຈດ້ານຄວາມກ້າສ່ຽງ ແລະ ປັດໄຈດ້ານຄວາມຫ້າວຫັນ; ສ່ວນປັດໄຈສ່ວນປະສົມທາງການຕະຫຼາດ ທີ່ມີຄວາມສຳພັນແບບເສັ້ນຊື່, ມີຜົນໄປໃນທິດທາງດຽວກັນ ແລະ  ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ ປະກອບມີ: ປັດໄຈດ້ານຜະລິດຕະພັນ.

**ຄຳສັບສຳຄັນ:** *ປັດໄຈທີ່ສົ່ງຜົນ, ການແຂ່ງຂັນ, ທຸລະກິດຫັດຖະກຳ, ນະຄອນຫຼວງພະບາງ*

# Factors Affecting for Competitive Advantage of Handicraft Business in Luang Prabang City

**Bounthan THYSAVANG[*] Soudthida HOONGSENGPHA[2] Souksamone SENGCHAN**

*Department of Business Management, Faculty of Economics and Tourism Souphanouvong University, Lao PDR*

***Correspondence:***
*Bounthan THYSAVANG,*
*Tel: +856 20 55666858,*
*E-mail:*
*bounthantysavang@gmail.com*

***Article Info:***
*Submitted: Mar 02, 2023*
*Revised: May 28, 2023*
*Accepted: Jun 06, 2023*

## Abstract

This research is to study the level of ability to create a competitive advantage and the relationship of the factors affecting the competitive advantage of handicraft businesses in Luang Prabang city; using five indicators of entrepreneur capacity theory, these include: proactiveness, Autonomy, risk-taking, innovation, and competitive aggressiveness. Then, using marketing mixed theory (4Ps) including product, price, place, and promotion to analyze the relationship and the factors affecting the competitive advantage of handicraft business in Luang Prabang city. The sample for this research was the entrepreneurs of 84 handicraft shops in Luang Prabang. Five level of Likert Scale of questionnaire was applied to collect data, there is a reliability level of 0.829 (82.9%) and Using SPSS statistical software for data analyzed the frequency, percent, mean, standard Deviation, Pearson Correlation Coefficient and, Multiple Regression Analysis.

The result of the research found that: the capacity of the entrepreneur to competitive advantage of handicraft business part appears at a higher level, while the capacity of the competitive advantage of handicraft business indicator shows at the highest level, especially differentiation, cost strategy, and quick response respectively; the ability factors of entrepreneurs that have a linear relationship, the same effect, and result in the creation of a competitive advantage for handicraft businesses in Luang Prabang city include two factors: risk-taking and Proactiveness, while the marketing mixed factor has a linear relationship and has the same result. There is only one factor as the product that affect to create the capacity of competitive advantage for handicraft businesses in Luang Prabang city.

**Keywords:** *Factors Affecting, Competition, Handicraft Business, Luang Prabang City*

## 1. ພາກສະເໜີ

ເຄື່ອງຫັດຖະກຳ ເປັນສິ່ງທີ່ຄຽງຄູ່ກັບການດຳລົງຊີວິດຂອງຄົນລາວເຮົາມາຕັ້ງແຕ່ບູຮານນະການ ໂດຍແມ່ນບັນພະບູລຸດເຮົາເປັນຜູ້ຄິດຄົ້ນປະດິດຄິດສ້າງເພື່ອຮັບໃຊ້ໃນຊີວິດປະຈຳວັນ ເຊິ່ງຈະມີຫລາຍໆ ປະເພດທີ່ເປັນສິລະປະທີ່ມີມາແຕ່ບູຮານເຊັ່ນ: ສິລະປະທາງດ້ານວັດທະນະທຳ, ສິລະປະທາງດ້ານຫັດຖະກຳຈັກສານ, ວັດຖຸ, ລວດລາຍ ແລະ ອື່ນໆ ໂດຍນຳໃຊ້ໃນຊີວິດປະຈຳວັນ, ໂອກາດທີ່ສຳຄັນ, ໃນງານບຸນປະເພນີຕ່າງໆ. ເປັນໜຶ່ງໃນອົງປະກອບຂອງວັດທະນະທຳໃນການດຳລົງຊີວິດ ເຊິ່ງໄດ້ກາຍເປັນເອກະລັກຂອງຊາດລາວ ແລະ ສິ່ງດັ່ງກ່າວສະແດງອອກໃນການໃຊ້ໃນຊີວິດປະຈຳວັນຕ່າງໆກໍ່ຍັງປະກົດໃຫ້ເຫັນຢູ່ທຸກມື້ນີ້. ໂດຍສະເພາະ ຫຼວງພະບາງ ເຊິ່ງເປັນເມືອງມໍລະດົກໂລກໄດ້ສະແດງອອກຢູ່ບ່ອນວ່າຍັງມີການໃຊ້ໃນງານບຸນປະເພນີຕ່າງໆ ຈົນຮອດປະຈຸບັນ. ນອກຈາກທີ່ປະຊາຊົນໄດ້ຊົມໃຊ້ແລ້ວ ເຄື່ອງຫັດຖະກຳ ຍັງເປັນຜະລິດຕະພັນ ແລະ ທີ່ນັກທ່ອງທ່ຽວກໍ່ນິຍົມຊື້ເພື່ອເອົາໄປເປັນຂອງຕ້ອນຂອງຝາກ ແລະ ເປັນສິນຄ້າສຳຄັນໃນການສົ່ງອອກ ອີກດ້ວຍ (ນະພາພອນ ວົງວຽນທອງ, 2018).

ນະຄອນຫຼວງພະບາງ ກໍ່ເປັນເມືອງໜຶ່ງທີ່ມີຊື່ສຽງນັບແຕ່ນະຄອນຫຼວງພະບາງ ທີ່ໄດ້ຮັບຂຶ້ນທະບຽນເປັນ ເມືອງມໍລະດົກໂລກທາງດ້ານວັດທະນາທຳ ຈາກອົງການ UNESCO ໃນປີ 1995 ເປັນຕົ້ນມາ, ນະຄອນຫຼວງພະບາງ ໄດ້ກາຍເປັນຈຸດໝາຍປາຍທາງຂອງນັກທ່ອງທ່ອງທັງພາຍໃນ ແລະ ຕ່າງປະເທດທີ່ຢາກຈະເດີນທາງເຂົ້າມາສຳຜັດ ແລະ ທ່ຽວຊົມວິຖີຊີວິດ, ຮີດຄອງປະເພນີ, ວັດທະນາທຳ ແລະ ແຫຼ່ງທ່ອງທ່ອງທຳມະຊາດທີ່ສວຍສົດງົດງາມນັບມື້ນັບສູງຂຶ້ນ ເປັນຜົນເຮັດໃຫ້ການຂະຫຍາຍຕົວຂອງນັກທອງທ່ຽວ ແລະ ຜູ້ປະກອບການໃນອຸດສາຫະກຳການທ່ອງທ່ຽວຢູ່ໃນນະຄອນຫຼວງພະບາງມີການພັດທະນາຂະຫຍາຍຕົວຂຶ້ນຢ່າງຕໍ່ເນື່ອງ ເຮັດໃຫ້ການມີຜູ້ປະກອບການຫຼາຍຂຶ້ນ ໂດຍສະເພາະແມ່ນ ທຸລະກິດເຄື່ອງຫັດຖະກຳ ທີ່ເປັນເອກະລັກຂອງຊາວ ນະຄອນຫຼວງພະບາງ ເນື່ອງຈາກປະຊາຊົນທີ່ຢູ່ນະຄອນ ຫຼວງພະບາງແມ່ນມີຮີດຄອງປະເພນີອັນດີງາມ, ມີຄວາມດຸໝັ່ນຂະຫຍັນພຽນ ໃນການທຳມາຫາກິນ ນອກຈາກມີອາຊີບເປັນຊາວກະສິກອນແລ້ວ ຍັງເປັນຊ່າງທາງສີໄມ້ລາຍມື ໃນການຕ່ຳຫູກທໍໄໝ ທີ່ມີຊື່ສຽງມາແຕ່ຮຸ່ນປູ່ຍ່າຕາຍາຍ ສືບທອດກັນມາຈົນເຖິງປັດຈຸບັນ (ບົດສະຫຼຸບແຜນພັດທະນາເສດຖະກິດສັງຄົມ, 2018). ສະນັ້ນ, ອຳນາດການປົກຄອງນະຄອນຫຼວງພະບາງ ໄດ້ສົມທົບກັບອຳນາດການປົກຄອງທ້ອງຖິ່ນແຕ່ລະບ້ານທີ່ມີເງື່ອນໄຂໃຫ້ຖືເອົາເຄື່ອງຫັດຖະກຳ ທີ່ຕິດພັນເປັນບ້ານວັດທະນະທຳ ແລະ ເຮັດເປັນບ້ານການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ ເພື່ອເປັນບ່ອນຮຽນຮູ້ວິຖີຊີວິດ, ການດຳລົງຊີວິດ, ຮີດຄອງວັດທະນະທຳ ເຊັ່ນ: ຫັດຖະກຳ ຕີເຄື່ອງປະດັບ, ແກະສະລັກ, ຈັກສານ ແລະ ຕ່ຳແຜ່ນແພ ເຫຼົ່ານີ້ເປັນຕົ້ນ (ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ, ແຂວງຫຼວງພະບາງ).

ການສ້າງຄວາມໄດ້ປຽບໃນການແຂ່ງຂັນແມ່ນຂະບວນການທີ່ຈະກ້າວໄປສູ່ການເປັນນຳໃນຕະຫຼາດ ຫຼື ການສ້າງລາຍຮັບ/ກຳໄລທີ່ຫຼາຍກ່ວາຄູ່ແຂ່ງ. ທຸລະກິດສາມາດສ້າງກຳໄລໄດ້ຢ່າງຍືນຍົງ ແລະ ດີກວ່າຄູ່ແຂ່ງຂັນ ນັ້ນມັນເປັນພາລະກິດທີ່ສຳຄັນສຳລັບການດຳເນີນທຸລະກິດໃນໄລຍະຍາວ (ສົມຍົດ ນາວີການ, 2548:212) ແລະ ຄວາມໄດ້ປຽບໃນການແຂ່ງຂັນແມ່ນສິ່ງໜຶ່ງທີ່ມີຄວາມຈຳເປັນຂອງການດຳເນີນທຸລະກິດທີ່ນັບມື້ນັບມີການແຂ່ງຂັນທີ່ຮຸນແຮງ ( Wasutida Nakkasem & Prasopchai Pasunon, 2018) ຜູ້ປະກອບການຕະຫຼາດຊຸມຊົນທີ່ປະສົບຜົນສຳເລັດຕ້ອງອີງໃສ່ທ່າແຮງ ແລະ ການກໍ່ສ້າງຄວາມໄດ້ປຽບໃນການແຂ່ງຂັນ ຈຶ່ງຈະສາມາດຊ່ວຍເຮັດໃຫ້ທຸລະກິດມີກຳໄລ ແລະ ເໜືອກວ່າຄູ່ແຂ່ງ. ໃນດ້ານການສ້າງຄວາມແຕກຕ່າງຂອງຜະລິດຕະພັນ, ການພັດທະນາ ນະວັດຕະກຳຜະລິດໃຫມ່ ແລະ ການບໍລິຫານຄຸ້ມຄອງທີ່ມີປະສິດທິພາບ ຈະເຮັດໃຫ້ທຸລະກິດສາມາດບັນລຸເປົ້າຫມາຍ ແລະ ຕອບສະຫນອງຄວາມຕ້ອງການຂອງລູກຄ້າທີ່ມີການປ່ຽນແປງຢ່າງຕໍ່ເນື່ອງ.

ຈາກສະພາບການດັ່ງກ່າວ, ຜູ້ສຶກສາຈຶ່ງມີຄວາມສົນໃຈ ແລະ ຕ້ອງການທີ່ຈະສຶກສາເພື່ອຊອກຫາ ບັນດາປັດໃຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບທຸລະກິດເຄື່ອງຫັດຖະກຳໃນນະຄອນຫລວງພະບາງ ເພື່ອຈະສຶກສາ ແລະ ນຳເອົາຂໍ້ມູນທີ່ມີປະໂຫຍດມາໃຊ້ເປັນແນວທາງໃນການປັບປຸງ ສົ່ງເສີມ ຜູ້ປະກອບການເຄື່ອງ

ຫັດຖະກຳທີ່ເຮັດດ້ວຍສີໄມ້ລາຍມື ທີ່ເປັນເອກະລັກຂອງຊາວຫຼວງພະບາງ ໃຫ້ມີຄວາມເຂັ້ມແຂງ ໂດດເດັ່ນ ແລະ ກ້າວສູ່ຄວາມສຳເລັດຢ່າງມີປະສິດທິພາບ ພ້ອມທັງສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ.

ຈຸດປະສົງໃນການສຶກສາໃນຄັ້ງນີ້ແມ່ນ 1) ເພື່ອສຶກສາລະດັບຄວາມສາມາດຂອງຜູ້ປະກອບການໃນການສ້າງຄວາມໄດ້ປຽບໃນການແຂ່ງຂັນໃນການປະກອບທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ ແລະ 2) ເພື່ອສຶກສາຄວາມສຳພັນບັນດາປັດໃຈໃນການພະຍາກອນລະຫວ່າງປັດໃຈທີ່ສົ່ງຜົນຕໍ່ຄວາມສາມາດໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນໃນການປະກອບທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ,

## 2. ອຸປະກອນ ແລະ ວິທີການ

### 2.1 ເຄື່ອງມືໃນການເກັບຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາແມ່ນແບບສອບຖາມເປັນແບບປະເມີນຄ່າ (Likert-type Scale,1932 ) ໃຫ້ຜູ້ຕອບແບບສອບຖາມໄດ້ສະແດງຄວາມຄິດເຫັນເປັນ 5 ລະດັບ ຕາມຄວາມເປັນຈິງໃນດ້ານຕ່າງໆ ແລະ ຜົນຂອງການຫາຄ່າຄວາມເຊື່ອໝັ້ນ (Reliability) ດ້ວຍຄ່າສຳປະສິດຂອງ Cronbach’s Alpha ໄດ້ຄ່າຄວາມເຊື່ອໝັ້ນເທົ່າກັບ 0.829 (82.9%). ເຊິ່ງປັດໃຈທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ແມ່ນປະກອບມີ ປັດໃຈດ້ານຄວາມສາມາດຂອງຜູ້ປະກອບການ 5 ດ້ານ: ດ້ານຄວາມຫ້າວຫັນແລະການການຮຽນຮູ້, ດ້ານຄວາມເປັນຕົວເອງ, ດ້ານຄວາມກ້າສ່ຽງ, ດ້ານການມີນະວັດຕະກຳ ແລະ ດ້ານຄວາມເຂັ້ມແຂງທາງການແຂ່ງຂັນ (Dess, Lumpkin & Taylor: 2005) ແລະ ປັດໃຈດ້ານສ່ວນປະສົມທາງການຕະຫຼາດ 4Ps: ດ້ານະລິດຕະພັນ, ດ້ານລາຄາ, ການການຈັດຈຳໜ່າຍ ແລະ ດ້ານການສົ່ງເສີມການຂາຍ (Siriwan Sereerat, 2013) ທີ່ໄດ້ອ້າງອີງກ່ຽວກັບແນວຄິດສ່ວນປະສົມທາງການຕະຫຼາດຂອງ Philip Kotler and Killer (Marketing Mix 4Ps) ໃນການວິເຄາະຫາປັດໃຈໃນການສ້າງຄວາມໄດ້ປຽບທາງການການແຂ່ງຂັນ 3 ດ້ານ (Porter 1990 &2005) ປະກອບມີ: Cost Leadership, Differentiation & Quick response.

### 2.2 ວິທີການຄົ້ນຄ້ວາ

ເປັນການສຶກສາຄົ້ນຄວ້າແບບປະລິມານໂດຍການລົງສຳຫລວດ (Survey Research). ກຸ່ມຕົວຢ່າງທີ່ໃຊ້ການສຶກສາ ແມ່ນບັນດາຜູ້ປະກອບການຮ້ານຂາຍເຄື່ອງຫັດຖະກຳຕາມເຂດເທດສະບານຕົວເມືອງ ແລະ ສູນຂາຍເຄື່ອງຫັດຖະກຳທີ່ຂຶ້ນກັບ ນະຄອນຫຼວງພະບາງ ຈຳນວນ 84 ຮ້ານ. ຫຼັງຈາກນັ້ນ, ນຳຂໍ້ມູນມາກວດກາ ສ້າງຖານປ້ອນຂໍ້ມູນ ແລະ ທຳການວິເຄາະຫາຄ່າສະຖິຕິຕ່າງໆ ດ້ວຍການນຳໃຊ້ໂປຼແກຼມສຳເລັດຮູບສະຖິຕິ (SPSS 24.0) ໃນການປະມວນຜົນປະກອບມີ: ຄ່າຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ຄ່າເພຍສັນ (Pearson Correlation) ແລະ ສົມຜົນທົດຖອຍພະຫຸຄູນ (Multiple Regression) ໃນລະດັບຄວາມສຳຄັນທາງສະຖິຕິ $P \leq 0.05$.

### 2.3 ສົມມຸດຖານການສຶກສາ

ປັດໃຈດ້ານຄວາມສາມາດຂອງຜູ້ປະກອບການ ແລະ ດ້ານສ່ວນປະສົມທາງການຕະຫຼາດ ມີຄວາມສຳພັນທາງບວກ ແລະ ສົ່ງຜົນຕໍ່ກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການປະກອບທຸລະກິດຫັດຖະກຳໃນນະຄອນ ຫຼວງພະບາງ.

### 2.4. ກອບແນວຄິດໃນການວິເຄາະ

**ຕົວແປອິດສະຫລະ** | **ຕົວແປຕາມ**

ປັດໃຈທີ່ມີຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳ

1. **ປັດໃຈດ້ານຄວາມສາມາດຂອງຜູ້ປະກອບການ**
   - ຄວາມສາມາດໃນການຄວບຄຸມສະຖານະການ ($X_1$)
   - ຄວາມເປັນຕົວເອງ ($x_2$)
   - ຄວາມກ້າສ່ຽງ ($x_3$)
   - ຄວາມມີນະວັດຕະກຳ ($x_4$)
   - ການແຂ່ງຂັນແບບເຊີງບຸກ ($x_5$)
2. **ປັດໃຈດ້ານສ່ວນປະສົມທາງການຕະຫຼາດ**
   - ດ້ານຜະລິດຕະພັນ ( $x_6$)
   - ດ້ານລາຄາ ($x_7$)
   - ດ້ານຊ່ອງທາງການຈັດຈຳໜ່າຍ ($x_8$)
   - ດ້ານການສົ່ງເສີມການຕະຫຼາດ ($x_9$)

→

ການສ້າງຄວາມໄດ້ປຽບໃນແຂ່ງຂັນຂອງການດຳເນີນທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ (Y)

## 3. ຜົນໄດ້ຮັບ

### 3.1 ຂໍ້ມູນການປະກອບທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ

ຜົນການສຶກສາພົບວ່າ: ຜູ້ປະກອບການທຸລະກິດຫັດຖະກຳໃນນະຄອນຫຼວງພະບາງສ່ວນໃຫຍ່ແມ່ນເປັນ ເພດຍິງ (65.5%), ມີອາຍຸລະຫວ່າງ 31-40 ປີ (44.0%), ທີ່ມີສະຖານະພາບແຕ່ງງານແລ້ວ (70.2%), ມີລະດັບການສຶກສາວິຊາຊີບ (46.4%), ເປັນທຸລະກິດສ່ວນບຸກຄົນ (97.6%) ທີ່ມີການດຳເນີນກິດຈະການຫຼາຍກ່ວາ 10 ປີ (53.6%) ເຊິ່ງຂາຍສິນຄ້າປະເພດຜ້າແພ (ຝ້າຍ-ໄໝ) (56.0%) ທີ່ຜະລິດ ແລະ ຈຳໜ່າຍເອງ (73.8%), ແຮງງານທີ່ໃຊ້ໃນການດຳເນີນງານລະ ຫວ່າງ 3-4 ຄົນ (41.6%), ມູນຄ່າການລົງທຶນ (ທຶນຈົດທະບຽນ) <100 ລ້ານກີບ (44.0%) ຊ່ອງທາງການຈຳໜ່າຍແມ່ນຂາຍຢູ່ໜ້າຮ້ານໂດຍກົງ (88.1%) ດ້ວຍວິທີການຕິດຕັ້ງປ້າຍໂຄສະນາໜ້າຮ້ານ (58.3%) ແລະ ບໍ່ໄດ້ເຂົ້າເປັນສະມາຊິກກຸ່ມຫັດຖະກຳ ຫຼື ໂຄງການ ODOP ຂອງລັດຖະບານ (66.7%).

### 3.2 ຄວາມສາມາດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ

ຜົນການສຶກສາພົບວ່າ ກຸ່ມຕົວຢ່າງທີ່ມີຄວາມຄິດເຫັນ ກ່ຽວກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ ແມ່ນຢູ່ໃນລະດັບຫຼາຍ, ທີ່ມີຄ່າສະເລ່ຍ $\bar{X}$ = 4.10. ໂດຍມີລາຍລະອຽດໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ ດັ່ງຕາຕະລາງລຸ່ມນີ້:

ກຸ່ມຕົວຢ່າງທີ່ມີຄວາມຄິດເຫັນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາລະອຽດຈະພົບວ່າ: ລະ ດັບການສ້າງການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ ທີ່ມີຄ່າສະເລ່ຍສູງສຸດ-ລະດັບຫຼາຍທີ່ສຸດ ແມ່ນ ດ້ານການສ້າງຄວາມແຕກຕ່າງ (Differentiation) ທີ່ມີຄ່າສະເລ່ຍລະຫວ່າງ 4.21-5.00, ສ່ວນຍຸດທະສາດດ້ານຕົ້ນທຶນ (Cost Leadership) ແລະ ດ້ານການຕອບສະໜອງຢ່າງວ່ອງໄວ (Quick Response) ແມ່ນຢູ່ໃນລະດັບຫຼາຍ ທີ່ມີຄ່າສະເລ່ຍລະຫວ່າງ 3.41-4.20.

### 3.3 ການວິເຄາະປັດໄຈທີ່ສົ່ງຜົນຕໍ່ກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ

ການທົດສອບຄວາມສຳພັນດ້ວຍຄ່າຂອງ Pearson Correlation ກ່ຽວກັບປັດໄຈທີ່ມີຄວາມສຳພັນກັບສາມາດໃນການສ້າງຄວາມໄດ້ປຽບທາງການແຂ່ງ ຂັນຂອງທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ. ໂດຍປັດໄຈທີ່ໃຊ້ເຂົ້າໃນການວິເຄາະຄັ້ງນີ້ມີທັງໝົດ 9 ປັດໄຈທີ່ໃຊ້ເປັນຕົວປ່ຽນອິດສະຫຼະ ແລະ ພົບວ່າ ມີ 1 ປັດໄຈ ຄື: ປັດໄຈດ້ານຄວາມກ້າສ່ຽງ ($x_3$) ທີ່ຄວາມສຳພັນກັນກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ ໃນລະດັບສູງ ທີ່ມີຄ່າຄວາມສຳພັນສະເລ່ຍລະຫວ່າງ 0.61 – 0.80. ສ່ວນອີກ 7 ປັດໄຈປະກອບມີ: ຄວາມຫ້າວຫັນ ແລະ ການຮຽນຮູ້ ($x_1$), ດ້ານຄວາມມີນະວັດຕະກຳ ($x_4$), ດ້ານຄວາມເຂັ້ມແຂງໃນທາງການແຂ່ງຂັນ ($x_5$), ດ້ານຜະລິດຕະພັນ ($x_6$), ດ້ານລາຄາ ($x_7$), ດ້ານການຈັດຈຳໜ່າຍ ($x_8$) ແລະ ດ້ານການສົ່ງເສີມການຂາຍ ($x_9$) ທີ່ຄວາມສຳພັນກັນກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ ໃນລະດັບປານກາງ ທີ່ມີຄ່າຄວາມສຳພັນສະເລ່ຍລະຫວ່າງ 0.41 – 0.60 (Sig.= 0.000 <0.05).

ຜົນການວິເຄາະການຖົດຖອຍພະຫຸຄູນໃນການພະຍາກອນກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ. ພົບວ່າ ທັງໝົດ 8 ປັດໄຈໃນການຄັດເລືອກເຂົ້າສູ່ການວິເຄາະເພື່ອການພະຍາກອນພົບວ່າ ມີພຽງ 3 ປັດໄຈຄື: ຄວາມຫ້າວຫັນ ແລະ ການຮຽນຮູ້ ($x_1$); ປັດໄຈດ້ານຄວາມກ້າສ່ຽງ ($x_3$) ແລະ ປັດໄຈດ້ານຜະລິດຕະພັນ ($x_6$) ທີ່ມີຄວາມສຳພັນແບບເສັ້ນຊື່ກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ. ໂດຍຕົວປ່ຽນກຸ່ມນີ້ມີຄວາມສຳພັນ ແລະ ມີຜົນຕໍ່ການ

ພະຍາກອນໃນລະດັບ 77.9% (R=0.779) ໂດຍມີຄ່າຄວາມຊັດເຈນ 60.8% ($R^2$= 0.608). ໂດຍສາມາດສ້າງສົມຜົນໃນການພະຍາກອນໃນຮູບແບບດັ່ງນີ້:

$$\hat{Y} = 0.218\ X_1+0.413X_3+0.221X_6$$

## 4. ວິພາກຜົນ

ຈາກການສຶກສາລະດັບຄວາມສາມາດໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ ໂດຍລວມແມ່ນຢູ່ໃນລະດັບຫຼາຍ, ເຊິ່ງມີຄວາມສອດຄ່ອງກັບການສຶກສາຂອງ Wasutida Nakkasem & Prasopchai Pasunon (2018) ທີ່ສຶກສາການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດບໍລິການໃນກຸງເທບ ປະເທດໄທ ແລະ ມີລະດັບຂອງຄວາມສາມາດທີ່ສອດຄ່ອງ ແລະ ຄືກັນນັ້ນແມ່ນລະດັບຄວາມສາມາດໃນດ້ານຍຸດທະສາດຂອງຕົ້ນທຶນ ເຊິ່ງມີຄວາມສອດຄ່ອງກັບແນວຄິດຂອງ ສຸພະນັດ ຊຸຊິນປຣາການ (2003:33) ກ່າວວ່າ ຍຸດທະສາດຕົ້ນທຶນ ເປັນຍຸດທະສາດທີ່ເຊື່ອວ່າ ຕົ້ນທຶນຈະຕໍ່າລົງຖ້າຜູ້ປະຕິບັດງານມີປະສົບການໃນການເຮັດວຽກຫຼາຍຂຶ້ນ ແລະ ຍຸດທະສາດການເປັນຜູ້ນຳຈຶ່ງເນັ້ນໃສ່ການສ້າງຂະບວນການຜະລິດທີ່ມີປະສິດທິພາບ, ການຄວບຄຸມຕົ້ນທຶນ ແລະ ຄ່າໃຊ້ຈ່າຍຢ່າງເຂັ້ມງວດ ໂດຍຫຼີກລ້ຽງລູກຄ້າລາຍຍ່ອຍ ແລະ ຫຼຸດຕົ້ນທຶນການດຳເນີນການໃນດ້ານຕ່າງໆ ເຊັ່ນ: ການວິໄຈແລະພັດທະນາ, ການໂຄສະນາ ແລະ ການສົ່ງເສີມການຂາຍ ເຫຼົ່ານີ້ເປັນຕົ້ນ, ເພາະສິ່ງເຫຼົ່ານີ້ເປັນຫົວໃຈຫຼັກຂອງການເພີ່ມ ຫຼື ຫຼຸດ ຕົ້ນທຶນໃນການດຳເນີນກິດຈະການ. ດັ່ງນັ້ນ, ບັນດາຜູ້ປະກອບການທຸລະກິດຫັດຖະກຳ ຫຼື ທຸລະກິດການບໍລິການໃນ ນະຄອນຫຼວງພະບາງ ຄວນຖືເອົາການເປັນຜູ້ນຳດ້ານຕົ້ນທຶນ ເຊັ່ນ: ການຄວບຄຸມຕົ້ນທຶນ ແລະ ຄ່າໃຊ້ຈ່າຍທີ່ເໝາະສົມ, ການນຳໃຊ້ຊັບພະຍາກອນໃຫ້ເກີດຜົນແລະມີປະສິດທິພາບ, ການມີປະສົບການໃນການຜະລິດ ແລະ ຄວບຄຸມ ຫຼື ຫຼຸດຄ່າໃຊ້ຈ່າຍທີ່ບໍ່ຈຳເປັນໃນດຳເນີນງານ ເຫຼົ່ານີ້ນີ້ເປັນຕົ້ນ ເພື່ອໃຊ້ເປັນຍຸດທະສາດໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ.

ຈາກການວິເຄາະຄວາມສຳພັນ ແລະ ການພະຍາກອນກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ, ພົບວ່າ: ປັດໄຈໃນດ້ານຄວາມກ້າສ່ຽງ ແລະ ປັດໄຈດ້ານຜະລິດຕະພັນ ແມ່ນປັດໄຈທີ່ສົ່ງຜົນໃນທິດທາງບວກ ແລະ ເປັນທິດທາງດຽວກັບກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ. ເຊິ່ງມີຄວາມສອດຄ່ອງກັບການສຶກສາຂອງ Wasutida Nakkasem & Prasopchai Pasuno (2018) ທີ່ສຶກສາພົບວ່າ ປັດໄຈໃນຄວາມກ້າສ່ຽງ, ປັດໄຈດ້ານຄວາມຫ້າວຫັນແລະການຮຽນຮູ້ ແລະ ປັດໄຈດ້ານຜະລິດຕະພັນ ທີ່ສົ່ງຜົນໃນທິດທາງດຽວກັນກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ. ນັ້ນໝາຍຄວາມວ່າ:

- ເມື່ອຜູ້ປະກອບການມີຄວາມເດັດຂາດ ແລະກ້າໃນກ້າຕັດສິນໃຈໃນການລົງທຶນ ແລະ ພ້ອມຮັບໃນຄວາມສ່ຽງ ຫຼື ຄວາມລົ້ມເຫຼວເພີ່ມຂຶ້ນ ໂອກາດການສ້າງຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດຈະເພີ່ມຂຶ້ນ 0.413 ເທົ່າ ຫຼື ເທົ່າກັບ 41.3% ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ຫຼື ດ້ວຍລະດັບຄວາມເຊື່ອໝັ້ນ 99%.

- ເມື່ອຜູ້ປະກອບການມີຄວາມຫ້າວຫັນ ແລະ ການຮຽນຮູ້ ເພື່ອສະແຫວງຫາໂອກາດ ແລະ ປະສົບການໃນການດຳເນີນທຸລະກິດຫຼາຍຂຶ້ນ ໂອກາດການສ້າງຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດຈະເພີ່ມຂຶ້ນ 0.218 ເທົ່າ ຫຼື ເທົ່າກັບ 21.8%. ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ຫຼື ດ້ວຍລະດັບຄວາມເຊື່ອໝັ້ນ 95%.

- ເມື່ອຜູ້ປະກອບການມີການພັດທະນາຜະລິດຕະພັນ ຫຼື ເຮັດໃຫ້ເປັນທີ່ຮູ້ຈັກໃນສັງຄົມ, ມີການຮັບປະກັນ ແລະ ມີຄວາມຫຼາກຫຼາຍຮູບແບບໃຫ້ເລືອກເພີ່ມຂຶ້ນ ໂອກາດການສ້າງຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດຈະເພີ່ມຂຶ້ນ 0.221 ເທົ່າ ຫຼື ເທົ່າກັບ 22.1%. ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ຫຼື ດ້ວຍລະດັບຄວາມເຊື່ອໝັ້ນ 95%.

## 5. ສະຫຼຸບ

ຜົນການສຶກສາກ່ຽວກັບລະດັບຄວາມສາມາດໃນ

ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ ໂດຍລວມແມ່ນຢູ່ໃນລະດັບຫຼາຍ. ເຊິ່ງໃນນັ້ນ, ດ້ານການສ້າງຄວາມແຕກຕ່າງຂອງການອອກແບບ-ມີເອກະລັກຂອງຜະລິດຕະພັນ, ການປະຍຸກສິນຄ້າໄປຕາມຄ່ານິຍົມໃນສັງຄົມ, ການສ້າງຄຸນຄ່າ/ຄວາມປະທັບໃຈໃຫ້ກັບລູກຄ້າ ແລະ ການຄວບຄຸມ-ຮັກສາຄຸນນະພາບ/ມາດຕະຖານຂອງສິນຄ້າ ແມ່ນສາມາດເຮັດໃຫ້ທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ ສາມາດສ້າງຄວາມໄດ້ປຽບຢູ່ໃນລະດັບຫຼາຍທີ່ສຸດ.

ຜົນການສຶກສາກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ. ພົບວ່າ: ມີພຽງ 3 ປັດໄຈທີ່ສົ່ງຜົນຫຼື ມີອິດທິພົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນ ນະຄອນຫຼວງພະບາງ ຄື: ປັດໄຈດ້ານຄວາມກ້າສ່ຽງ; ປັດໄຈດ້ານຄວາມຫ້າວຫັນແລະການຮຽນຮູ້, ປັດໄຈດ້ານຜະລິດຕະພັນ ທີ່ມີຄວາມສຳພັນແບບເສັ້ນຊື່ ແລະ ສົ່ງຜົນໃນທາງບວກ ທີ່ມີລະດັບຄວາມສຳຄັນທາງສະຖິຕິ 0.05 = 95%.

## 6. ຂໍ້ຄັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 8. ເອກະສານອ້າງອີງ

ຈັນນິພັດ ປະທຸມມາ, 2010. ຍຸດທະສາດທາງການຕະຫຼາດເພື່ອສ້າງຄວາມໄດ້ປຽບທາງການແຂ່ງຂັນໃນທຸລະກິດປະກັນໄພ, ກໍລະນີສຶກສາ: ບໍລິສັດເມືອງໄທປະກັນໄພ (ມະຫາຊົນ) ບົດວິທະຍານິພົນ ມະຫາວິທະຍາໄລທຳການຄ້າໄທ.

ສົມຍົດ ນາວີການ (2548). "ປື້ມການບໍລິຫານຍຸດທະສາດ" ກຸງເທບ: ບັນນາທິການ 1991:212

ສຸພະນັດ ຊຸຊົນປຣາການ (2003) "ຍຸດທະສາດການສ້າງຄວາມໄດ້ປຽບທາງການແຂ່ງຂັນ" For Quality.10 (74): 32-35.

ນະພາພອນ ວົງວຽນທອງ (2018). ປັດໄຈທີ່ມີຜົນຕໍ່ຄວາມສາມາດທາງການແຂ່ງຂັນຂອງທຸລະກິດຫັດຖະກຳ: ບົດໂຄງການຈົບຊັ້ນຂອງ ມະຫາວິທະຍາໄລສຸພານຸວົງ.

ບົດສະຫຼຸບຕີລາຄາ ຜົນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ປີ 2018, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຫວງພະບາງ.

ແຜນພັດທະນາເສດຖະກິດ - ສັງຄົມ 5 ປີ 2021-2025 ຄັ້ງທີ IX ແຂວງຫລວງພະບາງ.

Dess,G.G., Lumpkin, G.T. & Taylor, M.L. (2005). Strategic Management : Creating Competitive Advantage (2nd ed.). New York : McGraw-Hill.

Korler,P. & Keller,K.(2006). Marketing Management. (12th ed.). Pearson Education.

Korler, P. (2009). Marketing, na Introduction (9th ed.). New Jersey: Pearson Prenice Hall.

Likert Rensis (1932). "A Technique for the Measurement of Attitudes" archives of Psychilogy. 104: 1-55.

Porter M.E. (1980). Competitive Strategy: Techniques for analyzing industries and competitions. New York: Free Press.

Porter M.E. (1990). "The Competitive Advantage of Nations". New York: Free Press.

Porter, M.E. (2005). The Competitive Advantage Creating and Sustaining Superior Performance. New York: The Free Press.4.

Philips Korler, (2014). Marketing Management. (14th ed.) New Jersey: Prentice-Hall

Siriwan Sereerat. (2013). ກົນລະຍຸດການຕະຜລາດ ແລະ ການບໍລິຫານການຕະຫຼາດ. ກຸງເທບ. ທີລະຟິມ ແລະ ໄຊເທັກຈຳກັດ.

[Wasutida Nakkasem & Prasopchai Pasunon (2018). ປັດໃຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດບໍລິການໃນເຂດກຸງເທບ ມະຫານະຄອນ [J], Veridian E-Journal, Silpakorn University 11(1):2149-2167.

**ຕາຕະລາງ 1:** ຄ່າສະເລ່ຍ $\bar{X}$ ຄ່າຄ່າຜັນປ່ຽນມາດຕະຖານ (S.D.) ແລະ ລະດັບການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ

| ອັນດັບ | ການສ້າງຄວາມໄດ້ປຽບທາງການແຂ່ງຂັນ | $\bar{X}$ | S.D | ແປຜົນ |
|---|---|---|---|---|
| 1 | ດ້ານການສ້າງຄວາມແຕກຕ່າງ (Y2) | 4.21 | 0.424 | ລະດັບຫຼາຍສຸດ |
| 2 | ດ້ານຍຸດທະສາດຂອງຕົ້ນທຶນ (Y1) | 4.12 | 0.400 | ລະດັບຫຼາຍ |
| 3 | ດ້ານການຕອບສະໜອງຢ່າງວ່ອງໄວ (Y3) | 3.97 | 0.462 | ລະດັບຫຼາຍ |
| **ສະພາບລວມການສ້າງຄວາມໄດ້ປຽບທາງການແຂ່ງຂັນ (Y)** | | **4.10** | **0.318** | **ລະດັບຫຼາຍ** |

**ຕາຕະລາງ 2:** ການທົດສອບຄວາມສຳພັນດ້ວຍຄ່າຂອງ Pearson Correlation ກ່ຽວກັບປັດໃຈທີ່ມີຄວາມສຳພັນກັບສາມາດໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ

**Correlations[b]**

| | | X1 | X2 | X3 | X4 | X5 | X6 | X7 | X8 | X9 | Y |
|---|---|---|---|---|---|---|---|---|---|---|---|
| X1 | Pearson Correlation | 1 | .196 | .532** | .481** | .445** | .413** | .585** | .656** | .475** | .591** |
| X2 | Pearson Correlation | .196 | 1 | .197 | .020 | .095 | .123 | .150 | .195 | .206 | **.140** |
| X3 | Pearson Correlation | .532** | .197 | 1 | .598** | .660** | .607** | .456** | .416** | .580** | **.702**** |
| X4 | Pearson Correlation | .481** | .020 | .598** | 1 | .535** | .498** | .462** | .383** | .383** | .529** |
| X5 | Pearson Correlation | .445** | .095 | .660** | .535** | 1 | .474** | .386** | .429** | .458** | .464** |
| X6 | Pearson Correlation | .413** | .123 | .607** | .498** | .474** | 1 | .510** | .310** | .478** | .598** |
| X7 | Pearson Correlation | .585** | .150 | .456** | .462** | .386** | .510** | 1 | .539** | .499** | .485** |
| X8 | Pearson Correlation | .656** | .195 | .416** | .383** | .429** | .310** | .539** | 1 | .579** | .473** |
| X9 | Pearson Correlation | .475** | .206 | .580** | .383** | .458** | .478** | .499** | .579** | 1 | .536** |
| Y | Pearson Correlation | .591** | .140 | .702** | .529** | .464** | .598** | .485** | .473** | .536** | 1 |

**. Correlation is significant at the 0.01 level (2-tailed).

b. Listwise N=84

**ຕາຕະລາງ3:**ຜົນການທົດຖອຍພະຫຸຄູນກ່ຽວກັບປັດໃຈທີ່ສົ່ງຜົນຕໍ່ຄວາມສາມາດໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດຫັດຖະກຳໃນນະຄອນຫຼວງພະບາງ.

| | B | S.E. | Beta | t | sig |
|---|---|---|---|---|---|
| (Constant) | 1.047 | .372 | | 2.812 | .006 |
| ຄວາມຫ້າວຫັນ ແລະ ການຮຽນຮູ້ ($X_1$) | .210 | .105 | .218 | 2.003 | **.049*** |
| ຄວາມກ້າສ່ຽງ ($X_3$) | .300 | .087 | .413 | 3.433 | **.001**** |
| ຄວາມມີນະວັດຕະກຳ ($X_4$) | .054 | .069 | .076 | .781 | .437 |
| ຄວາມເຂັ້ມແຂງທາງການແຂ່ງຂັນ ($X_5$) | -.101 | .092 | -.112 | -1.102 | .274 |
| ຜະລິດຕະພັນ ($X_6$) | .193 | .086 | .221 | 2.234 | **.028*** |
| ລາຄາ ($X_7$) | -.010 | .093 | -.011 | -.109 | .913 |
| ການຈັດຈຳໜ່າຍ ($X_8$) | .065 | .099 | .071 | .655 | .514 |
| ການສົ່ງເສີມການຂາຍ ($X_9$) | .063 | .087 | .073 | .716 | .476 |
| **R = 0.779; $R^2$= 0.608, SEE=0.24973, F=14.515, sig of F=0.000** | | | | | |

*ໝາຍເຫດ:**. ມີຄວາມສຳພັນທາງສະຖິຕິທີ່ລະດັບ 0.01 ແລະ *. ມີຄວາມສຳພັນທາງສະຖິຕິທີ່ລະດັບ 0.05*